ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====----

ທະນາຄານແຫ່ງ ສປປ ລາວ

ສຳນັກງານ ຄຄຊ

ເລກທີ 1456/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 26 ພະຈິກ 2014

# ແຈ້ງການ

**ເຖິງ:** ບັນດາພະແນກພາຍໃນສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ;

**ເລື່ອງ:** ການເປີດນຳໃຊ້ລະບົບຈອງຫ້ອງປະຊຸມ ພາຍໃນສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ.

- ອີງຕາມຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສຳນັກງານ ຄຄຊ, ສະບັບເລກທີ 013/ຄຄຊ, ນະຄອນຫຼວງວຽງຈັນ, ວັນທີ 17 ທັນວາ 2013;
- ອີງຕາມແຜນການເຄື່ອນໄຫວວຽກງານຂອງ ສຄຄຊ ປີ 2014.

ຫົວໜ້າສຳນັກງານ ຄຄຊ ແຈ້ງມາຍັງບັນດາພະແນກພາຍໃນສຳນັກງານ ຄຄຊ ຊາບວ່າ: ປະຈຸບັນລະບົບຈອງຫ້ອງປະຊຸມຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ແມ່ນໄດ້ສຳເລັດແລ້ວ ແລະ ຈະໄດ້ເປີດນຳໃຊ້ລະບົບດັ່ງກ່າວ ເພື່ອເປັນການສ້າງຄວາມສະດວກສະບາຍໃຫ້ແກ່ການຮັບໃຊ້ວຽກງານ ແລະ ຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງພະນັກງານພາຍໃນສຳນັກງານ ຄຄຊ ໃນການນຳໃຊ້ຫ້ອງປະຊຸມ. ເພື່ອເຮັດໃຫ້ລະບົບຈອງຫ້ອງປະຊຸມຂອງສຳນັກງານ ຄຄຊ ໄດ້ມີການປັບປຸງ ແລະ ສາມາດນຳໃຊ້ໄດ້ຢ່າງມີປະສິດທິພາບ, ໃນການຈອງຫ້ອງປະຊຸມແມ່ນມອບໃຫ້ແຕ່ລະພະແນກເປັນເຈົ້າການຮັບຜິດຊອບ ກວດກາຄວາມຖືກຕ້ອງກ່ອນການປັບປຸງ ແລະ ເພີ່ມເຕີມຂໍ້ມູນເຂົ້າໃນລະບົບ. ສະນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ເລີ່ມປະຕິບັດການນຳໃຊ້ລະບົບດັ່ງກ່າວຕັ້ງແຕ່ວັນທີ 01 ທັນວາ ປີ 2014 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທຸກພະແນກເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າສຳນັກງານ ຄຄຊ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ★ ສຳນັກງານ ຄຄຊ

ສາຍສະໝອນ ຈັນທະຈັກ